work safe! Bulletin

ເລກທີ 193

ເດືອນມັງກອນ 2003

# ສິດຂອງທ່ານໃນການປະຕິເສດເຮັດວຽກອັນຕະລາຍ

*ຄວາມປອດໄພແລະອະນາມັຍຢູ່ບ່ອນເຮັດວຽກແມ່ນເລື້ອງທີ່ທຸກຄົນຄວນເປັນຫ່ວງແລະມັນກໍແມ່ນສິດຂອງທຸກໆ ຄົນ. ທ່ານມີສິດທີ່ຈະປະຕິເສດການເຮັດວຽກທີ່ມີອັນຕະລາຍ ແລະສິດອັນນີ້ຂອງທ່ານແມ່ນໄດ້ຮັບການຄຸ້ມຄອງຈາກກົດໝາຍ*

## *ອັນຕະລາຍຢູ່ບ່ອນເຮັດວຽກ*

ໃນຊີວິດການເຮັດວຽກຂອງທ່ານອາດຈະມີບາງເທື່ອທີ່ທ່ານໄດ້ປະເຊີນກັບວຽກທີ່ຕ້ອງສ່ຽງຕໍ່ອັນຕະລາຍຊຶ່ງກ່ຽວຂ້ອງກັບຄວາມປອດໄພແລະສຸຂພາບຂອງທ່ານ ຊຶ່ງເຫັນວ່າເປັນເລື້ອງຜິດປົກກະຕິຂອງວຽກງານ. ເຫດການທີ່ມີອັນຕະລາຍນັ້ນຄວນແຈ້ງໃຫ້ຫົວໜ້າຄວບຄຸມງານຂອງທ່ານຮູ້ທັນທີ ເພື່ອປ້ອງກັນບໍ່ໃຫ້ມີການບາດເຈັບຫລືວ່າການລົ້ມປ່ວຍເກີດຂື້ນ. ໃນກໍລະນີສ່ວນຫລາຍນັ້ນ ເຫດການແບບນີ້ຈະແກ້ໄຂໄດ້ໂດຍການຕັດສິ່ງທີ່ເປັນອັນຕະລາຍອອກ. ຖ້າຫາກວ່າເຫດການແບບນີ້ບໍ່ໄດ້ຖືກແກ້ໄຂເທື່ອ ທ່ານສາມາດໃຊ້ສິດຂອງທ່ານ ໂດຍການປະຕິເສດບໍ່ຍອມເຮັດວຽກດັ່ງກ່າວນັ້ນ.

## *ສິດຂອງການປະຕິເສດແມ່ນຫຍັງ?*

ຕາມກົດໝາຍແລ້ວ (ກົດໝາຍກ່ຽວກັບຄວາມປອດໄພແລະອະນາມັຍຢູ່ບ່ອນເຮັດວຽກຂອງແຂວງມານີໂຕບາ) ທ່ານສາມາດປະຕິເສດການເຮັດວຽກ ຊຶ່ງທ່ານມີຫລັກຖານອ້າງອີງທີ່ສົມເຫດສົມຜົນແລະເປັນໜ້າເຊື່ອຖືໄດ້ວ່າ ວຽກນັ້ນຈະມີອັນຕະລາຍຕໍ່ຄວາມປອດໄພແລະສຸຂພາບຂອງທ່ານເອງ ຫລືວ່າຄວາມປອດໄພແລະສຸຂພາບຂອງຜູ້ອື່ນ. (ການປະຕິເສດເຮັດວຽກເລີ້ມຈາກຄົນງານ)

> *ມາດຕາທີ 43(1) ຂອງກົດໝາຍໄດ້ລະບຸໄວ້ວ່າ:* "ຄົນງານສາມາດປະຕິເສດການເຮັດວຽກທັງໝົດ ຫລືວ່າການເຮັດສະເພາະບາງວຽກຢູ່ບ່ອນເຮັດວຽກ ຖ້າວ່າເຂົາເຊື່ອໝັ້ນ ໂດຍມີຫລັກຖານອ້າງອີງທີ່ສົມເຫດສົມຜົນວ່າ ວຽກນັ້ນຈະມີອັນຕະລາຍຕໍ່ຄວາມປອດໄພຫລືວ່າສຸຂພາບຂອງເຂົາ ຫລືວ່າຕໍ່ຄວາມປອດໄພ ຫລືສຸຂພາບຂອງຄົນງານຜູ້ອື່ນ ຫລືວ່າຕໍ່ຄົນອື່ນໆ ອີກ."

ຢ່າລືມວ່າ...ທ່ານຈະບໍ່ຖືກລົງໂທດໃນການໃຊ້ສິດຂອງທ່ານປະຕິເສດດ້ວຍຄວາມຈິງໃຈທີ່ຈະບໍ່ເຮັດວຽກນັ້ນ, ແລະທ່ານຍັງມີສິດໄດ້ຮັບຄ່າຈ້າງແລະຜົນປະໂຫຍດອື່ນໆ ເທົ່າກັນກັບຈຳນວນທີ່ທ່ານເຄີຍໄດ້ຮັບໃນເວລາກ່ອນໜ້າເລື້ອງປະຕິເສດເຮັດວຽກບໍ່ທັນເກີດຂື້ນ. ນາຍຈ້າງຂອງທ່ານອາດຈະຈັດວຽກອັນອື່ນ ໃຫ້ທ່ານເຮັດຊົ່ວຄາວໃນລະຍະເຫດການດັ່ງກ່າວກຳລັງຖືກແກ້ໄຂຢູ່. ທ່ານຄວນຢູ່ບ່ອນເຮັດວຽກຂອງທ່ານຕາມຊົ່ວໂມງເຮັດວຽກປົກກະຕິນອກຈາກວ່ານາຍຈ້າງຂອງທ່ານອະນຸຍາດໃຫ້ທ່ານເມືອບ້ານໄດ້.

## *ວຽກອັນຕະລາຍແມ່ນຫຍັງ?*

ວຽກ "ອັນຕະລາຍ" ມີຄວາມໝາຍທົ່ວໄປຄື: ວຽກທີ່ສ່ຽງອັນຕະລາຍຊຶ່ງກ່ຽວຂ້ອງກັບຄວາມປອດໄພແລະສຸຂພາບ ຊຶ່ງເຫັນວ່າເປັນເລື້ອງຜິດປົກກະຕິຂອງວຽກງານ.

## *ຂັ້ນຕອນທີ່ກ່ຽວຂ້ອງມີຫຍັງແດ່?*

<u>ຂັ້ນທີ 1</u>

ແຈ້ງໃຫ້ຫົວໜ້າຄວບຄຸມງານຂອງທ່ານຮູ້ທັນທີ ຫລືວ່າແຈ້ງໃຫ້ຄົນອື່ນທີ່ຮັບຜິດຊອບຢູ່ບ່ອນເຮັດວຽກ, ຊີ້ແຈ້ງເຫດຜົນທີ່ທ່ານປະຕິເສດການເຮັດວຽກນັ້ນ.
ໃນເວລານີ້ຄົນງານທີ່ໄດ້ປະຕິເສດການເຮັດວຽກແລະຫົວໜ້າຄວບຄຸມງານຕ້ອງໄດ້ພະຍາຍາມແກ້ໄຂບັນຫາດັ່ງກ່າວ.
ຖ້າວ່ານາຍຈ້າງໄດ້ແກ້ໄຂບັນຫາຈົນເປັນທີ່ພໍໃຈຂອງທ່ານ ທ່ານກໍໄດ້ກັບຄືນໄປເຮັດວຽກຕໍ່. ຖ້າວ່າທ່ານຍັງເຊື່ອວ່າວຽກນັ້ນຍັງມີອັນຕະລາຍຢູ່...

<u>ຂັ້ນທີ 2</u>

ຖ້າວ່າຫົວໜ້າຄວບຄຸມງານແລະຄົນງານບໍ່ສາມາດແກ້ໄຂວຽກທີ່ຖືກປະຕິເສດນັ້ນ ຄົນງານຜູ້ທີ່ເປັນປະທານຂອງຄະນະກັມມະການກ່ຽວຂ້ອງກັບຄວາມປອດໄພແລະອະນາມັຍ ຫລືວ່າສະມາຊິກຂອງຄະນະກັມມະການຜູ້ທີ່ເປັນໂຕແທນຂອງຄົນງານ (ຫລືວ່າຜູ້ຕາງໜ້າຂອງຄົນງານຖ້າວ່າບໍ່ມີຄະນະກັມມະການ) ຕ້ອງໄດ້ຖືກເຊີນມາຊ່ອຍກວດເບິ່ງບ່ອນເຮັດວຽກ.

ຖ້າວ່າສະພາບອັນຕະລາຍຍັງບໍ່ໄດ້ຖືກແກ້ໄຂເທື່ອຫລັງຈາກທີ່ມີການກວດວຽກແລ້ວ.

(ໜ້າຕໍ່ໄປ)

*ຂັ້ນຕອນທີ່ກ່ຽວຂ້ອງມີຫຍັງແດ່?(ຕໍ່)*

## ຂັ້ນທີ 3

ຜູ້ໃດທີ່ໄດ້ຮ່ວມໃນການກວດວຽກຢູ່ຂັ້ນທີ 2 ສາມາດແຈ້ງໃຫ້ເຈົ້າໜ້າທີ່ຂອງຄວາມປອດພັຍແລະອະນາມັຍກ່ຽວກັບເລື້ອງການປະຕິເສດເຮັດວຽກ ແລະເຫດຜົນທີ່ໄດ້ປະຕິເສດໃນດ້ານເຮັດວຽກດັ່ງກ່າວ. ເຈົ້າໜ້າທີ່ຂອງຄວາມປອດພັຍແລະອະນາມັຍຈະໄດ້ສືບສວນເລື້ອງນີ້ແລະຕັດສິນວ່າວຽກງານທີ່ຄົນງານໄດ້ປະຕິເສດເຮັດນັ້ນ ມີອັນຕະລາຍຕໍ່ຄວາມປອດພັຍແລະສຸຂພາບຂອງຄົນງານຜູ້ນັ້ນຫລືບໍ່ ຫລືວ່າມີອັນຕະລາຍຕໍ່ຄົນງານຜູ້ອື່ນ ຫລືວ່າຄົນອື່ນໆຢູ່ໃນບ່ອນເຮັດວຽກຫລືບໍ່.

ເຈົ້າໜ້າທີ່ຈະມອບໜັງສືບັນທຶກການຕັດສິນໃຫ້ແກ່ພະນັກງານທີ່ໄດ້ປະຕິເສດການເຮັດວຽກ ພ້ອມທັງມອບໃຫ້ແກ່ປະທານທຸກໆ ຄົນ ຫລືວ່າຜູ້ຕາງໜ້າແລະນາຍຈ້າງ. ຜູ້ໃດທີ່ໄດ້ຮັບຜົນສະທ້ອນໂດຍຕົງຈາກການຕັດສິນໃຈຂອງເຈົ້າໜ້າທີ່ນັ້ນ ສາມາດຍື່ນຄຳຮ້ອງຂໍອຸທອນ ໄປຍັງຜູ້ອຳນວຍການຂອງພະແນກຄວາມປອດພັຍແລະອະນາມັຍໃນບ່ອນເຮັດວຽກ. ຜູ້ອຳນວຍການຈະຕັດສິນກ່ຽວກັບຄຳຂໍຮ້ອງນີ້ ແລະຈະໃຫ້ເຫດຜົນກ່ຽວກັບການຕັດສິນນັ້ນໂດຍເປັນລາຍລັກອັກສອນ. ການຕັດສິນຂອງຜູ້ອຳນວຍການສາມາດສົ່ງໄປຫາ ກົມແຮງງານຂອງແຂວງມານີໂຕບາເພື່ອຂໍອຸທອນໄດ້.